ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ຫ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມທະວິພາຄີ ລະຫວ່າງ
# ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ




ໃນລະຫວ່າງວັນທີ 20-23 ພະຈິກ 2022 ຄະນະຜູ້ແທນຂອງ ທະນາຄານແຫ່ງ ສປປ ລາວ ນຳໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ເດີນທາງໄປຢ້ຽມຢາມ ຣາຊະອານາຈັກ ກຳປູເຈຍ ຊຶ່ງໃນຕອນເຊົ້າ, ວັນທີ 21 ພະຈິກ 2022 ທີ່ ນະຄອນພະນົມເປັນ, ຣາຊະອານາຈັກ ກຳປູເຈຍ ໄດ້ມີກອງປະຊຸມທະວິພາຄີປະຈຳປີ 2022 ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງຊາດ ກຳປູເຈຍ ຊຶ່ງຝ່າຍ ທຫລ ຕາງໜ້າໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ຝ່າຍ ທະນາຄານແຫ່ງຊາດ ກຳປູເຈຍ ຕາງໜ້າໂດຍ ທ່ານ ເຈຍ ຈັນໂຕ ຜູ້ວ່າການ ທະນາຄານແຫ່ງຊາດ ກຳປູເຈຍ ພ້ອມດ້ວຍຄະນະກົມຕາງໜ້າຈາກສອງທະນາຄານກາງ ແລະ ທ່ານເລຂານຸການເອກ, ສະຖານເອກອັກຄະລັດຖະທູດ ປະຈຳ ສປປ ລາວ ຣາຊະອານາຈັກ ກຳປູເຈຍ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມ.





ກອງປະຊຸມດັ່ງກ່າວແມ່ນ ເພື່ອເປັນການສະຫຼຸບໝາກຜົນການຮ່ວມມືຂອງຂະແໜງການເງິນ-ເງິນຕາ ໃນໄລຍະ 01 ປີຜ່ານມາ ແລະ ແລກປ່ຽນທັດສະນະໃນການວາງທິດທາງການຮ່ວມມືໃນຕໍ່ໜ້າ ໂດຍໄດ້ມີການປຶກສາຫາລື ແລະ ແລກປ່ຽນ ບົດຮຽນຮ່ວມກັນໃນຫຼາຍບັນຫາສຳຄັນຕົ້ນຕໍຄື: ສະພາບເສດຖະກິດມະຫາພາກ, ການດຳເນີນນະໂຍບາຍເງິນຕາ, ວຽກງານຄຸ້ມຄອງທະນາຄານທຸລະກິດລັດ, ການຮ່ວມມືທາງດ້ານວິຊາການ ແລະ ບັນຫາອື່ນໆ ທີ່ສອງຝ່າຍໃຫ້ຄວາມສົນໃຈຮ່ວມກັນ. ນອກນັ້ນ, ໃນຕອນທ້າຍຂອງກອງປະຊຸມຍັງໄດ້ເປີດໂອກາດໃຫ້ ຕາງໜ້ານັກທຸລະກິດຂອງສອງປະເທດ ລາວ-ກຳປູເຈຍ ລາຍງານການດຳເນີນທຸລະກິດ ແລະ ແລກປ່ຽນຂໍ້ຄິດເຫັນນຳ ການນຳທະນາຄານກາງຂອງສອງປະເທດ.

ໃນກອງປະຊຸມທະວິພາຄີປະຈຳປີ 2022 ຄັ້ງນີ້, ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ ກໍ່ໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານນະວັດຕະກຳທາງການເງິນ ແລະ ລະບົບການຊຳລະລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ






ກອງປະຊຸມໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືທີ່ດີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ ແລະ ສາມາດບັນລຸຜົນສຳເລັດຕາມລະດັບຄາດໝາຍ. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ຖືເປັນຂີດໝາຍອັນສຳຄັນໃນການເສີມຂະຫຍາຍສາຍພົວພັນຮ່ວມມືຂອງສອງປະເທດເວົ້າລວມ, ເວົ້າສະເພາະກໍ່ຄື ສອງທະນາຄານກາງໃຫ້ນັບມື້ນັບເພີ່ມທະວີຄວາມສະໜິດແໜ້ນ, ຄວາມສາມັກຄີມິດຕະພາບ ແລະ ການຮ່ວມມືທີ່ເລິກຊຶ້ງຫຼາຍຂຶ້ນກວ່າເກົ່າ.

ນອກນີ້, ທະນາຄານແຫ່ງຊາດ ກຳປູເຈຍ ຍັງໄດ້ມີວາລະພິເສດ ເພື່ອແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ (Sharing FX management experience) ໃຫ້ແກ່ ຜູ້ແທນ ທະນາຄານແຫ່ງ ສປປ ລາວ ຊຶ່ງເປັນບົດຮຽນອັນລ້ຳໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຂະແໜງການທະນາຄານ.





*ເສດຖະກິດຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*